**ມິຊຊາອາທິດທີ 5 ກໍານົດປາສກາ ປີ A**

**ວັນທີ 10 ພຶດສະພາ 2020**



**ພຣະວໍລະສານໂດຍນັກບຸນຢວງ 14, 1-12**

ເວລາທີ່ພຣະເຢຊູຕ້ອງຈາກໂລກເມືອຫາພຣະບິດາໃກ້ຈະມາເຖິງ, ພຣະອົງຊົງກ່າວແກ່ພວກລູກສິດວ່າ: "ພວກເຈົ້າຢ່າຄັ່ງແຄ້ນໃຈເລີຍ. ຈົ່ງເຊື່ອເຖິງພຣະເປັນເຈົ້າແລະເຊື່ອເຖິງເຮົາດ້ວຍ. ຢູ່ເຮືອນພຣະບິດາຂອງເຮົາມີບ່ອນຢູ່ຫລວງຫລາຍ; ບໍ່ດັ່ງນັ້ນເຮົາຄົງຈະບໍ່ບອກພວກເຈົ້າ. ເຮົາໄປເພື່ອຕຽມບ່ອນໄວ້ໃຫ້ພວກເຈົ້າ. ແລະເມື່ອໄດ້ຕຽມບ່ອນແລ້ວ, ເຮົາກໍຈະຫລົບມາເອົາພວກເຈົ້າມາຢູ່ນໍາເຮົາ, ເພື່ອວ່າເຮົາຢູ່ບ່ອນໃດ,ພວກເຈົ້າກໍຈະຢູ່ນໍາດ້ວຍ. ສ່ວນບ່ອນທີ່ເຮົາຈະໄປ, ພວກເຈົ້າກໍຮູ້ຈັກທາງແລ້ວ". ໂທມາທູນວ່າ: "ພຣະອົງເຈົ້າເອີຍ ! ພວກຂ້ານ້ອຍຈະຮູ້ຈັກທາງໄດ້ຢ່າງໃດ?" ພຣະເຢຊູເຈົ້າຕອບວ່າ: "ເຮົາແມ່ນຫົນທາງ, ຄວາມຈິງແລະຊີວິດ. ບໍ່ມີໃຜໄປຫາພຣະບິດາໄດ້ໂດຍບໍ່ຜ່ານທາງເຮົາ."

"ຖ້າພວກເຈົ້າຮູ້ຈັກເຮົາ, ພວກເຈົ້າກໍຈະຮູ້ຈັກພຣະບິດາຂອງເຮົາດ້ວຍ. ຕັ້ງແຕ່ເວລານີ້ພວກເຈົ້າກໍຮູ້ຈັກພຣະບິດາແລະໄດ້ເຫັນພຣະອົງແລ້ວ." ຟີລິບທູນວ່າ: "ພຣະອົງເຈົ້າເອີຍ! ໂຜດຊີ້ສໍາແດງພຣະບິດາໃຫ້ພວກຂ້ານ້ອຍເຫັນເທົ່ານັ້ນ ກໍເປັນພໍ." ພຣະເຢຊູເຈົ້າຕອບວ່າ: "ຟີລິບເອີຍ! ເຮົາຢູ່ກັບພວກເຈົ້າແຕ່ເຫິງນານແລ້ວ, ເຈົ້າຍັງບໍ່ຮູ້ຈັກເຮົາບໍ? ໃຜໄດ້ເຫັນເຮົາກໍໄດ້ເຫັນພຣະບິດາດ້ວຍ. ເປັນຫຍັງເຈົ້າຈຶ່ງວ່າໂຜດຊີ້ສໍາແດງພຣະບິດາໃຫ້ພວກຂ້ານ້ອຍເຫັນ? ເຈົ້າບໍ່ເຊື່ອບໍວ່າເຮົາຢູ່ໃນພຣະບິດາ ແລະພຣະບິດາຢູ່ໃນເຮົາ? ຂໍ້ຄວາມທີ່ເຮົາກ່າວກັບພວກເຈົ້ານັ້ນ, ເຮົາບໍ່ໄດ້ກ່າວຕາມລໍາພັງເຮົາເອງ; ແມ່ນພຣະບິດາຜູ້ສະຖິດຢູ່ໃນເຮົາເປັນຜູ້ກະທໍາກິດຈະການຂອງພຣະອົງ. ຈົ່ງເຊື່ອຄວາມທີ່ເຮົາກ່າວ: ເຮົາຢູ່ໃນພຣະບິດາແລະພຣະບິດາຢູ່ໃນເຮົາ. ຖ້າບໍ່ເຊື່ອຄວາມເວົ້າ, ຢ່າງນ້ອຍຂໍໃຫ້ເຊື່ອຍ້ອນກິດຈະການຂອງເຮົາເອງ. ເຮົາບອກພວກເຈົ້າເປັນຄວາມຈິງວ່າ: "ໃຜເຊື່ອເຖິງເຮົາກໍຈະກະທໍາກິດຈະການທີ່ເຮົາກະທໍາຢູ່ນີ້ແລະຍັງຈະກະທໍາກິດຈະການທີ່ຍິ່ງໃຫຍ່ກວ່ານັ້ນອີກດ້ວຍ, ຍ້ອນເຮົາຄືນເມືອຫາພຣະບິດາ."

ນີ້ແມ່ນວາຈາຂອງພຣະຄຣິສໂຕເຈົ້າ

**ບົດແບ່ງປັນ: ຢຮ 14, 1-12**

ອາທິດທີ່ຜ່ານມາ, ພຣະເຢຊູເຈົ້າໄດ້ກ່າວແກ່ພວກຟາຣີເຊວ່າ: ພຣະອົງແມ່ນນາຍຊຸມພະບານ ແລະແມ່ນປະຕູຄອກແກະ. ນາຍຊຸມພະບານທີ່ດີເປັນຜູ້ທີ່ຮູ້ຈັກແກະແລະແກະກໍຟັງສຽງຂອງເຂົາ. ແລະ ພາລະກິດອັນສໍາຄັນຂອງນາຍຊຸມພະບານຄືການທໍາໃຫ້ຝູງແກະຂອງເຂົາມີຊີວິດ.

ສ່ວນວັນອາທິດນີ້, ພຣະເຢຊູເຈົ້າກ່າວແກ່ພວກລູກສິດຂອງພຣະອົງວ່າ: "ເຮົາແມ່ນຫົນທາງ, ຄວາມຈິງແລະຊີວິດ. ບໍ່ມີໃຜໄປຫາພຣະບິດາໄດ້ໂດຍບໍ່ຜ່ານທາງເຮົາ". ຄໍາເວົ້າຂອງພຣະເຢຊູເຈົ້ານີ້ແມ່ນຢູ່ ໃນບໍລິບົດຫລັງຈາກອາຫານຄໍ່າມື້ສຸດທ້າຍກ່ອນທີ່ພຣະອົງຈະຕ້ອງຮັບທໍລະມານແລະຕາຍ. ແລະພຣະເຢຊູ ເຈົ້າກໍຮູ້ຈັກວ່າເວລາທີ່ພຣະອົງຈະຕ້ອງຈາກໂລກນີ້ເມືອຫາພຣະບິດາເຈົ້າໃກ້ຈະມາເຖິງແລ້ວ. ດ້ວຍເຫດ ນີ້ພຣະອົງຈຶ່ງສັ່ງບອກພວກລູກສິດວ່າ ພວກເຈົ້າບໍ່ຕ້ອງຢ້ານກົວເລີຍ. ເຮົາຈະໄປເພື່ອຕຽມບ່ອນໄວ້ສໍາລັບ ພວກເຈົ້າ. ແຕ່ພວກລູກສິດບໍ່ຮູ້ວ່າພຣະອົງຈະໄປໃສ? ແລະຍິ່ງໄປກວ່ານັ້ນ, ພວກເຂົາກໍຍັງບໍ່ຮູ້ວ່າພຣະອົງ ແມ່ນໃຜ. ດັ່ງນັ້ນຟີລິບຈຶ່ງທູນພຣະເຢຊູເຈົ້າວ່າ: ພຣະອົງເຈົ້າເອີຍ! ໂຜດຊີ້ສໍາແດງພຣະບິດາເຈົ້າໃຫ້ພວກ ຂ້ານ້ອຍເຫັນເທົ່ານັ້ນກໍເປັນພໍ. ຄໍາເວົ້າຂອງຟີລິບນີ້ນີ້ທໍາໃຫ້ພວກເຮົາເຂົ້າໃຈວ່າພວກລູກສິດຍັງບໍ່ທັນເຂົ້າໃຈ ເຖິງວາຈາແລະຕົວຕົນຂອງພຣະເຢຊູເຈົ້າ. ເຖິງປານນັ້ນກໍດີ, ສິ່ງທີ່ພຣະເຢຊູເຈົ້າປາດຖະໜາໃຫ້ພວກ ລູກສິດກະທໍານັ້ນຄືເຊື່ອໃນພຣະອົງ. ເພາະມີແຕ່ຄວາມເຊື່ອເທົ່ານັ້ນທີ່ສາມາດທໍາໃຫ້ພວກລູກສິດສະໜິດສໍາ ພັນເປັນໜຶ່ງດຽວກັບພຣະເຢຊູເຈົ້າ ເໝືອນດັ່ງພຣະອົງເປັນໜຶ່ງດຽວກັບພຣະບິດາ. ແລະມີແຕ່ຄວາມເຊື່ອ ເທົ່ານັ້ນທີ່ຈະທໍາໃຫ້ພວກລູກສິດເຂົ້າໃຈວ່າເສັ້ນທາງທີ່ພຣະເຢຊູເຈົ້າຈະນໍາພວກເຂົາໄປສູ່ຄວາມຈິງແລະ ຊີວິດນັ້ນແມ່ນເສັ້ນທາງແຫ່ງມະຫາທໍລະມານແລະການຕາຍຂອງພຣະອົງເພື່ອໃຫ້ມະນຸດທຸກຄົນໄດ້ຮັບ ຄວາມຮອດອັນແມ່ນຊີວິດນິລັນດອນ.

ວັນນີ້ພຣະເຢຊູເຈົ້າກໍກ່າວກັບພວກເຮົາແຕ່ລະຄົນວ່າ: "ພຣະອົງແມ່ນຫົນທາງ,ຄວາມຈິງແລະຊີວິດ. ບໍ່ມີໃຜໄປຫາພຣະບິດາໄດ້ໂດຍບໍ່ຜ່ານທາງພຣະອົງ". ພວກເຮົາພ້ອມທີ່ຈະເຊື່ອໃນຄໍາເວົ້າຂອງພຣະອົງບໍ? ເສັ້ນທາງແຫ່ງຊີວິດຂອງພວກເຮົາແມ່ນພຣະເຢຊູເຈົ້າຫລືແມ່ນຄົນອື່ນ, ແມ່ນສິ່ງອື່ນທີ່ສໍາຄັນກວ່າພຣະອົງ? ພວກເຮົາພ້ອມແລ້ວບໍທີ່ຈະເດີນບົນເສັ້ນທາງຂອງພຣະອົງດ້ວຍການແບກກາງເຂນຂອງຕົນແຕ່ລະວັນເພື່ອ ຕິດຕາມພຣະອົງໄປ. ເພາະຖ້າພວກເຮົາຮ່ວມທຸກທໍລະມານກັບພຣະອົງ, ນໍາພຣະອົງພວກເຮົາຈະໄດ້ຮັບສິ ມຸງຄຸນ. ແລະຖ້າພວກເຮົາຮ່ວມຕາຍກັບພຣະອົງ, ນໍາພຣະອົງພວກເຮົາຈະມີຊີວິດ.

ຂໍໃຫ້ວາຈາພຣະເຈົ້າວັນນີ້ເປັນກໍາລັງໃຈແລະເປັນຄວາມຫວັງສໍາລັບພວກເຮົາໃນຍາມຖືກທົດສອບ, ໃນຍາມທຸກຍາກລໍາບາກ, ໃນຍາມສິ້ນຫວັງ. ເພາະພຣະເຢຊູເຈົ້າຜູ້ຊຶ່ງພວກເຮົາເຊື່ອໄດ້ໄຊຊະນະທຸກຢ່າງ ແລ້ວ. ຫາກພວກເຮົາເຊື່ອໃນພຣະອົງ ພວກເຮົາກໍຈະໄດ້ໄຊຊະນະເໝືອນດັ່ງພຣະອົງນັ້ນແລ. ອາແມນ.

ຄຸນພໍ່ ອົງຕວນ ກຽດຕິສັກ